ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 2012 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 08 ພະຈິກ 2023

# ຄຳສັ່ງ

## ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາ ການກຳນົດໂຄງປະກອບລາຄາ, ການຕິດ, ການປະກາດ ຫຼື ການໂຄສະນາລາຄາສິນຄ້າ ເປັນເງິນຕາຕ່າງປະເທດ

ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;

- ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ໃນຂອບເຂດທົ່ວປະເທດ;
- ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ສະພາການຄ້າ ແລະ ອຸດສາຫະກຳ ແຂວງ, ນະຄອນຫຼວງ.

- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ເລກທີ 15/ສພຊ, ລົງວັນທີ07 ກໍລະກົດ 2022;
- ອີງຕາມ ດຳລັດວ່າດ້ວຍການກວດກາການຄ້າ ສະບັບເລກທີ 508/ລບ, ລົງວັນທີ 04 ທັນວາ 2012;
- ອີງຕາມ ຄຳສັ່ງ ວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 10/ນຍ, ລົງວັນທີ 14 ກໍລະກົດ 2023.
- ອີງຕາມ ຂໍ້ຕົກລົງ ຄະນະຊ່ວຍວຽກຄະນະສະເພາະກິດ ສະບັບເລກທີ 1919/ອຄ, ລົງວັນທີ 19 ຕຸລາ2023.

ເພື່ອຜັນຂະຫຍາຍ ມາດຕາ 54, 55 ຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 15/ສພຊ, ລົງວັນທີ 7 ກໍລະກົດ 2022 ແລະ ຂໍ້(2) ຂໍ້ 2.3 ຄຳສັ່ງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ເລກທີ 10/ນຍ, ລົງວັນທີ 14 ກໍລະກົດ 2023 ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ ແລະ ເອກະພາບກັນໃນຂອບເຂດທົ່ວປະເທດ, ໂດຍສະເພາະຂອບເຂດຄວາມຮັບຜິດຊອບຂອງຂະແໜງອຸດສາຫະກຳ ແລະ ການຄ້າ ຊຶ່ງຕິດພັນກັບວຽກງານຄຸ້ມຄອງ ແລະ ຕິດຕາມ, ກວດກາ ທຸກພາກສ່ວນ ໃນການກຳນົດໂຄງປະກອບລາຄາ, ການຕິດ, ການປະກາດ ຫຼື ການໂຄສະນາລາຄາ, ການຊຳລະ ແລະ ຮັບຊຳລະລາຄາສິນຄ້າ ແລະ ຄ່າບໍລິການ, ລວມທັງການຊື້-ຂາຍຜ່ານຊ່ອງທາງການຄ້າເອເລັກໂຕຣນິກ, ການຊື້-ຂາຍຍານພາຫະນະ, ວັດຖຸມີຄ່າ ແລະ ຄ່າບໍລິການໃຫ້ຄຳປຶກສາ ຢູ່ ສປປ ລາວ ໃຫ້ເປັນເງິນກີບ.

## ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳສັ່ງ:

1. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ລົງໂຄສະນາເຜີຍແຜ່ໃຫ້ປະຊາຊົນ, ຊາວຄ້າຂາຍ, ຜູ້ປະກອບການ, ນັກທຸລະກິດທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດ, ອາໄສຢູ່ ສປປ ລາວ ໃນທ້ອງຖິ່ນຂອງຕົນ ໃຫ້ກຳນົດໂຄງປະກອບລາຄາ,

ການຕິດ, ການປະກາດ ຫຼື ການໂຄສະນາລາຄາ, ການຊໍາລະທຸກຮູບແບບ ລວມທັງການຊື້-ຂາຍ ຜ່ານຊ່ອງທາງການຄ້າເອເລັກໂຕຣນິກ, ການຊື້-ຂາຍຍານພາຫະນະ, ວັດຖຸມີຄ່າ ແລະ ຄ່າບໍລິການໃຫ້ຄໍາປຶກສາ ຢູ່ ສປປ ລາວ ເປັນເງິນກີບເທົ່ານັ້ນ.

2. ໃຫ້ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ ແຕ່ງຕັ້ງເຈົ້າໜ້າທີ່ກວດກາການຄ້າ ລົງຕິດຕາມ, ກວດກາ ບັນດາຫ້າງຮ້ານທີ່ຢູ່ໃນ ແລະ ນອກຕະຫຼາດ, ສູນການຄ້າ, ຫ້າງຊັບພະສິນຄ້າ, ຊາວຄ້າຂາຍ, ຮ້ານອາຫານ, ຫົວໜ່ວຍທຸລະກິດທັງພາຍໃນ ແລະ ຕ່າງປະເທດ ຢູ່ພາຍໃນທ້ອງຖິ່ນຕົນ.

3. ກໍລະນີພົບເຫັນມີການລະເມີດ ໃຫ້ປະຕິບັດມາດຕະການຕໍ່ຜູ້ລະເມີດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 54 ແລະ 55 ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022 ດັ່ງນີ້:

   3.1. ການລະເມີດທີ່ມີລັກສະນະເບົາບາງ ແລະ ເປັນຄັ້ງທໍາອິດ ຈະຖືກສຶກສາອົບຮົມ, ກ່າວເຕືອນ ພ້ອມທັງເຮັດບົດບັນທຶກເປັນລາຍລັກອັກສອນ ກໍານົດໃຫ້ປັບປຸງປ່ຽນແປງບໍ່ໃຫ້ເກີນ 30 ວັນ;

   3.2 ເຈດຕະນາລະເມີດ ຫຼື ເປັນຄັ້ງທີສອງ ແມ່ນໃຫ້ປັບໃໝຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 2 ຂໍ້ 1 ມາດຕາ 55 ແມ່ນປັບໃໝແຕ່ 10,000,000 (ສິບລ້ານ) ກີບ ຫາ 20,000,000 (ຊາວລ້ານ) ກີບ;

   3.3 ກໍລະນີລະເມີດຊໍ້າ ໃຫ້ປັບໃໝສອງເທົ່າ ຂອງມູນຄ່າປັບໃໝຄັ້ງຫຼ້າສຸດ.

4. ມອບໃຫ້ອົງການປະຕິບັດວຽກງານກວດກາການຄ້າ ສູນກາງ, ຄະນະກຸ່ມວຽກທີ 6 ຕິດຕາມ, ກວດກາ ແລະ ຊຸກຍູ້ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ ໃນການຈັດຕັ້ງປະຕິບັດຄໍາສັ່ງສະບັບນີ້ໃຫ້ມີປະສິດທິຜົນ ແລ້ວສະຫຼຸບ, ລາຍງານ ຜົນການຈັດຕັ້ງປະຕິບັດ ໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ເຈົ້າເມືອງ, ເຈົ້ານະຄອນ ຮັບຊາບຢ່າງເປັນປົກກະຕິ;

5. ໃຫ້ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ, ສະພາການຄ້າ ແລະ ອຸດສາຫະກໍາແຂວງ, ນະຄອນຫຼວງ ແຈ້ງໃຫ້ສະພາການຄ້າຕ່າງປະເທດ, ສະມາຄົມ, ຫົວໜ່ວຍທຸລະກິດ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ຈົ່ງຮັບຮູ້ ແລະ ປະຕິບັດຕາມຄໍາສັ່ງສະບັບນີ້ຢ່າງເຂັ້ມງວດ;

6. ຄໍາສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮທ. ລັດຖະມົນຕີ

ມ. ຈັນສຸກ ແສງພະຈັນ